ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*************************************************

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ                                        ເລກທີ 043/ຖວ

# <u>ຂໍ້ຕົກລົງ</u>

## ຂອງລັດຖະມົນຕີກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ວ່າດ້ວຍລະບຽບການຄຸ້ມຄອງ ລະບົບຮັບສັນຍານວິທະຍຸ-ໂທລະພາບ ຜ່ານດາວທຽມ

- ອີງຕາມ ດຳລັດຂອງສະພາລັດຖະມົນຕີ ເລກທີ 147/ປສລ,ລົງວັນທີ 28/12/89 ວ່າດ້ວຍ ກົງຈັກການຈັດຕັ້ງ ແລະ ສິດ ຂອງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ
- ອີງໃສ ຂໍ້ກຳນົດ ຂອງ ສະພາລັດຖະມົນຕີ ວ່າດ້ວຍລະບຽບການຄຸ້ມຄອງພາຫະນະ ແລະ ຄື້ນວິທະຍຸ ຕິດຕໍ່ສື່ສານ, ກະຈາຍສຽງ, ໂທລະພາບ ສະບັບເລກທີ 41/ປສລ,ລົງວັນທີ 13/08/1990

**ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຈື່ງອອກຂໍ້ກຳນົດກົດລະບຽບໃຫ້ທຸກພາກສ່ວນກ່ຽວຂ້ອງໃນທົ່ວປະເທດ ປະຕິບັດດັ່ງຕໍ່ໄປນີ້:**

## ພາກທີ I
## ຫຼັກການທົ່ວໄປ

**ມາດຕາ 01**: ບັນດາອົງການຈັດຕັ້ງລັດ, ລວມໝູ່, ບຸກຄົນ, ບັນດາສະຖານທູດ ແລະບັນດາອົງການຈັດຕັ້ງສາກົນ ທີ່ຕັ້ງພູມລຳເນົາ ຫລື ເຂົ້າມາເຄື່ອນໄຫວວຽກງານຕ່າງໆ ທີ່ຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ ລ້ວນແຕ່ມີສິດຄອບຄອງ, ນຳໄຊ້ພາຫະນະອຸປະກອນເຕັກນິກຮັບສັນຍານລາຍການວິທະຍຸ - ໂທລະພາບຜ່ານດາວທຽມ ຈະແມ່ນຊົ່ວຄາວ ຫລື ຍາວນານກໍ່ຕາມ.

**ມາດຕາ 02: ບັນດາພາຫະນະອຸປະກອນເຕັກນິກວິທະຍຸ-ໂທລະພາບຜ່ານດາວທຽມ ປະກອບດ້ວຍ:**

2.1 ຈານຮັບສັນຍານລາຍການ ( Antenna disk );

2.2 ເຄື່ອງເລືອກຈຸດທີ່ຕັ້ງດາວທຽມ ( Positionner );

2.3 ເຄື່ອງຮັບສະເພາະສັນຍານດາວທຽມ (Sat receiver);

2.4 ໂທລະພາບ (TV monitor)

ພາຫະນະອຸປະກອນເຕັກນິກທີ່ກ່າວມານີ້ ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ (ກົມສື່ມວນຊົນ).

**ມາດຕາ 03**: ອົງການຈັດຕັ້ງລັດ, ລວມໝູ່, ບຸກຄົນ, ບັນດາສະຖານທູດ, ບັນດາອົງການຈັດຕັ້ງສາກົນ ກ່ອນຈະນຳເຂົ້າພາຫະນະອຸປະກອນເຕັກນິກ ຮັບສັນຍານ ວິທະຍຸ - ໂທລະພາບ ຜ່ານດາວທຽມ ຕ້ອງໄດ້ຂໍອະນຸຍາດ ຈາກ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ (ກົມສື່ມວນຊົນ) ສຳລັບຕ່າງແຂວງ ແມ່ນໃຫ້ໄປຂໍອະນຸຍາດນຳເຂົ້າຈາກພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ.

**ມາດຕາ 04**: ທຸກອົງການຈັດຕັ້ງບຸກຄົນ ກ່ອນຈະຕິດຕັ້ງ-ນຳໃຊ້ ພາຫະນະອຸປະກອນເຕັກນິກ ວິທະຍຸ -ໂທລະພາບ ຜ່ານດາວທຽມ ຕ້ອງໄດ້ຂໍອະນຸຍາດຕິດຕັ້ງ ແລະ ນຳອຸປະກອນເຕັກນິກສະເໜີຕໍ່ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ເພື່ອກວດກາ ມາດຖານເຕັກນິກເສຍກ່ອນ ຈິ່ງຕິດຕັ້ງ ແລະ ນຳໃຊ້ໄດ້. ສະເພາະຕ່າງແຂວງ ແມ່ນໃຫ້ໄປຂໍອະນຸຍາດຕິດຕັ້ງ, ກວດກາເຕັກນິກ ນຳພະແນກ ຖະແຫຼງຂ່າວ ແລະ ວັດທະນະທຳ ແຂວງ.

**ມາດຕາ 05**: ທຸກອົງການຈັດຕັ້ງ, ບຸກຄົນທີ່ໄດ້ຮັບອະນຸຍາດຕິດຕັ້ງຄອບຄອງ ນຳໃຊ້ບັນດາອຸປະກອນເຕັກນິກຮັບສັນຍານ ວິທະຍຸ - ໂທລະພາບ ຍົກເວັ້ນບັນດາສະຖານທູດ, ອົງການຈັດຕັ້ງສາກົນທີ່ໄດ້ຮັບມອບໝາຍຈາກລັດຖະບານໃຫ້ມາເຮັດໜ້າທີ່ຕາງໜ້າດ້ານການທູດ ຢູ່ ສປປ ລາວ ຈະຕ້ອງປະຕິບັດພັນທະອັນຖືກຕ້ອງໃຫ້ແກ່ລັດ ຄື:

*5.1 ຄ່າທຳນຽມກຳມະສິດຄອບຄອງ 35,000 ກີບ;*

*5.2 ຄ່າທຳນຽມກຳມະສິດນຳໃຊ້ 7,000 ກີບ/ປີ ຕໍ່ໜຶ່ງຊ່ອງທາງອອກ (ຄູນໃຫ້ຈຳນວນຊ່ອງທາງອອກ);*

*5.3 ຄ່າກວດກາເຕັກນິກ 3,000 ກີບ.*

# ພາກທີ II

## ວ່າດ້ວຍການກວດກາສະພາບອຸປະກອນເຕັກນິກຮັບສັນຍານ ວິທະຍຸ - ໂທລະພາບ ຜ່ານດາວທຽມ

**ມາດຕາ 06**: ກ່ອນຈະນຳເອົາພາຫະນະອຸປະກອນເຕັກນິກ ຮັບສັນຍານ ວິທະຍຸ-ໂທລະພາບ ເຂົ້າ ສປປ ລາວ ຕ້ອງໄດ້ແຈ້ງໃບອະນຸຍາດນຳເຂົ້າຂອງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ຫຼື ຂອງພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງ ຕໍ່ເຈົ້າໜ້າທີ່ຕຳຫຼວດ ຫຼື ພະນັກງານພາສີປະຈຳດ່ານ ເພື່ອກວດກາໃກ້ຖືກຕ້ອງຕາມການອະນຸຍາດ.

**ມາດຕາ 07**: ໃນກໍລະນີບໍ່ມີໃບອະນຸຍາດນຳເຂົ້າຂອງ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຫຼື

ຂອງ ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ທີ່ໄດ້ກ່າວໄວ້ໃນ ມາດຕາ 03 ນັ້ນ ຈະໄດ້ຖືກກັກໄວ້ດ່ານຊົ່ວຄາວ ຈົນກ່ວາຈະໄດ້ອະນຸຍາດຢ່າງຖືກຕ້ອງ ຂອງ ກະຊວງ ຫລື ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ເສຍກ່ອນ ຈຶ່ງນຳເຂົ້າ ສປປ ລາວ.

**ມາດຕາ 08**: ທຸກໆ ການຄຸ້ມຄອງ ແລະ ນຳໃຊ້ພາຫະນະອຸປະກອນເຕັກນິກຮັບສັນຍານ ວິທະຍຸ - ໂທລະພາບ ຜ່ານດາວທຽມ ທີ່ໄດ້ຮັບການອະນຸຍາດໄປແລ້ວນັ້ນ ຈະໄດ້ຖືກກວດກາ ແລະ ຕິດຕາມ ທາງດ້ານເຕັກນິກ ແລະ ເນື້ອໃນເປັນປະຈຳ ຈາກ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ(ກົມສື່ມວນຊົນ).

## ພາກທີ III
## ວ່າດ້ວຍມາດຕະການຕໍ່ຜູ້ລະເມີດ

**ມາດຕາ 09. ອົງການຈັດຕັ້ງລັດ, ລວມໝູ່, ບຸກຄົນ, ບັນດາສະຖານທູດ ແລະ ອົງການຈັດຕັ້ງສາກົນຕ່າງໆ ຫາກຝ່າຝືນຕໍ່ຂໍ້ກຳນົດກົດລະບຽບສະບັບນີ້ ຈະຖືກປັບໄໝ ແລະ ໃສ່ໂທດຕາມກໍລະນີດັ່ງນີ້:**

**9.1** ໃນກໍລະນີລະເມີດການຄອບຄອງ - ນຳໃຊ້ ທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນັ້ນ

- ກະທຳຜິດ ຄັ້ງທີ 1: ຈະຖືກປັບໄໝໜຶ່ງເທົ່າຂອງຄ່າທຳນຽມນຳໃຊ້;
- ກະທຳຜິດ ຄັ້ງທີ 2: ຈະຖືກປັບໄໝສອງເທົ່າຂອງຄ່າທຳນຽມນຳໃຊ້;
- ກະທຳຜິດ ຄັ້ງທີ 3: ຈະຖືກປັບໄໝສາມເທົ່າຂອງຄ່າທຳນຽມນຳໃຊ້ ແລະ ຖອນໃບອະນຸຍາດ.

**9.2** ໃນກໍລະນີນຳເຂົ້າພາຫະນະອຸປະກອນເຕັກນິກເກີນກຳນົດ ຫຼື ບໍ່ຖືກກັບມາດຕະຖານເຕັກນິກທີ່ທາງກະຊວງ ຫຼື ພະແນກຖະແຫຼງຂ່າວ ແລະ ວັດທະນະທຳ ອະນຸຍາດແລ້ວນັ້ນ

- ຄັ້ງທີ 1. ຈະຖືກປັບໄໝຫ້າເທົ່າຂອງຄ່າທຳນຽມນຳໃຊ້ ແລະ ຍຶດພາຫະນະອຸປະກອນທີ່ເກີນໃບອະນຸຍາດ;
- ຄັ້ງທີ 2. ຈະຖືກອຸປະກອນເຕັກນິກທັງໝົດ, ຖອນໃບອະນຸຍາດ ພ້ອມທັງປັບໄໝສິບເທົ່າຂອງຄ່າທຳນຽມນຳໃຊ້.

**9.3** ໃນກໍລະນີປ່ຽນຈຸດທີ່ຕັ້ງຕາມລຳພັງໃຈຈາກທີ່ໄດ້ສະເໜີໄວ້ໃນໃບອະນຸຍາດແລ້ວນັ້ນ

- ຄັ້ງທີ 1. ຈະຖືກປັບໄໝສອງເທົ່າຂອງຄ່າທຳນຽມນຳໃຊ້;
- ຄັ້ງທີ 2. ຈະຖືກປັບໄໝສີ່ເທົ່າຂອງຄ່າທຳນຽມນຳໃຊ້;
- ຄັ້ງທີ 3. ຈະຖືກຍຶດພາຫະນະອຸປະກອນເຕັກນິກ, ຖອນໃບອະນຸຍາດ ພ້ອມທັງປັບໄໝຫ້າເທົ່າຂອງຄ່າທຳນຽມນຳໃຊ້.

**ມາດຕາ 10**. ຫ້າມບໍ່ໃຫ້ບຸກຄົນໃດ ອັດກ່າຍລາຍການໂທລະພາບຜ່ານດາວທຽມ ເພື່ອນຳມາຈຳໜ່າຍ ຫຼື ບໍລິການໃນຂອບເຂດທົ່ວປະເທດ ຢ່າງເດັດຂາດ.

**ມາດຕາ 11**. ຖ້າອົງການຈັດຕັ້ງລັດ, ລວມໝູ່, ບຸກຄົນ, ອົງການຈັດຕັ້ງສາກົນ, ບັນດາສະຖານທູດນຳ

ໃຊ້ບໍ່ຖືກຕ້ອງກັບກົດໝາຍຂອງລັດ ແລະ ບໍ່ສອດຄ່ອງກັບວັດທະນະທຳຮີດຄອງປະເພນີຂອງ ສປປ ລາວ ຈະຖືກຍຶດອຸປະກອນເຕັກນິກ, ຖອນໃບອະນຸຍາດຕໍ່ຜູ້ຝ່າຝືນ ທີ່ຜິດຕໍ່ກົດໝາຍອາຍາເຖິງຈະເຈດຕະນາ ແລະ ຈະເປັນຄັ້ງທຳອິດກໍລ້ວນແຕ່ຕ້ອງໄດ້ຖືກປັບໄໝໃສ່ໂທດ ຕາມກົດໝາຍອາຍາ ທີ່ບົ່ງໄວ້ໃນ ມາດຕາ 59 ແລະ 127 ຢ່າງເຂັ້ມງວດ.

**ມາດຕາ 12**. ຂໍ້ກຳນົດກົດລະບຽບສະບັບນີ້ ມີຜົນສັກສິດ ບັງຄັບໃຊ້ໃນທົ່ວປະເທດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ, ກົດລະບຽບ, ມະຕິ ແລະ ຄຳສັ່ງ ທີ່ຂັດກັບກົດລະບຽບສະບັບນີ້ ລ້ວນແຕ່ຖືກລຶບລ້າງ.

ວຽງຈັນ,ວັນທີ 25/01/1996

ຕ.ລັດຖະມົນຕີ

ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ

ບຸນເຕັງ ວົງໄຊ

( ໄດ້ເຊັນ ແລະ ຕີຕາແລ້ວ )